Australian Government

COVID-19 VACCINATION

# ຫຼັງຈາກການສັກວັກຊີນຕ້ານ COVID-19 ຂອງທ່ານ - Pfizer

## ຂໍ້ມູນກ່ຽວກັບຢາວັກຊີນ

ມື້ນີ້ທ່ານກໍໄດ້ຮັບການສັກຢາວັກຊີນທີ່ມີຊື່ວ່າ **Comirnaty (Pfizer Australia Pty Ltd).**

ຢາວັກຊີນຊະນິດນີ້ສາມາດປ້ອງກັນຄົນຈາກການເຈັບປ່ວຍຍ້ອນ COVID-19. Comirnaty ບໍ່ມີເຊື້ອໄວຣັສທີ່ມີຊີວິດປະສົມຢູ່, ແລະ ມັນຈະບໍ່ສາມາດໃຫ້ເຊື້ອ COVID-19 ແກ່ທ່ານໄດ້. ມັນປະກອບດ້ວຍລະຫັດພັນທຸກໍາສໍາລັບພາກສ່ວນອັນສໍາຄັນຂອງເຊື້ອໄວຣັສ SARS-CoV-2 ທີ່ເອີ້ນວ່າໂປຣຕີນຫຼືແຫຼມຄົມ. ຫຼັງຈາກໄດ້ຮັບການສັກຢາ, ຮ່າງກາຍຂອງທ່ານຈະເຮັດກູອບປີສໍາເນົາຂອງໂປຣຕີນແຫຼມຄົມນີ້. ຫຼັງຈາກນັ້ນລະບົບພູມຕ້ານທານຂອງທ່ານກໍຈະທໍາຄວາມຮູ້ຈັກແລະຕໍ່ສູ້ກັບເຊື້ອໄວຣັສ SARS-CoV-2. ລະຫັດພັນທຸກໍາຈະແຍກອອກຢ່າງວ່ອງໄວໂດຍຮ່າງກາຍ.

## ຈະເກີດຫຍັງຂຶ້ນຫຼັງຈາກການສັກຢາວັກຊີນ

ເຊັ່ນດຽວກັບຢາວັກຊີນຊະນິດອື່ນໆ, ທ່ານອາດຈະມີອາການຂ້າງຄຽງຫຼັງຈາກໄດ້ຮັບການສັກວັກຊີນ COVID-19.

**ອາການຂ້າງຄຽງ ທົ່ວໄປ** ຫຼັງຈາກສັກຢາ **Comirnaty** ລວມເຖິງ:

- ປວດຫຼືໃຄ່ທີ່ບໍລິເວນສັກຢາ
- ເມື່ອຍອ່ອນເພັຍ
- ເຈັບຫົວ
- ປວດຕາມກ້າມເນື້ອ,
- ເປັນໄຂ້ ແລະ ໜາວສັ່ນ
- ປວດຕາມຂໍ່.

**ອາການຂ້າງຄຽງ ທີ່ບໍ່ຄ່ອຍເປັນ** ຫຼັງຈາກສັກຢາ **Comirnaty** ລວມເຖິງ:

- ເປັນຮອຍຜື່ນແດງທີ່ບໍລິເວນສັກຢາ
- ປວດຮາກ
- ຕ່ອມນໍ້າເຫຼືອງໃຫຍ່ຂຶ້ນ
- ຮູ້ສຶກບໍ່ສະບາຍ
- ເຈັບຕາມແຂນຂາ
- ບັນຫາເລື່ອງການນອນບໍ່ຫຼັບ
- ມີອາການຄັນທີ່ບໍລິເວນສັກຢາ.

ອາການຂ້າງຄຽງເຫຼົ່ານີ້ຕາມປົກກະຕິຈະເປັນແຕ່ພຽງເບົາບາງແລະຈະຫາຍໄປພາຍມື້ໜຶ່ງຫຼືສອງມື້. ຜູ້ໄດ້ຮັບການສັກຢາບາງຄົນຈະຮູ້ສຶກມີອາການຄ້າຍໄຂ້ຫວັດໃຫຍ່ໜັກກວ່າປົກກະຕິຈາກວັກຊີນຊະນິດນີ້ເມື່ອທຽບກັບຢາວັກຊີນຊະນິດອື່ນໆທົ່ວໄປແລະອາດຕ້ອງການເວລາພັກຈາກກິດຈະກຳທີ່ເຄີຍເຮັດປົກກະຕິ. ອາການເຫຼົ່ານີ້ອາດຈະເກີດຂຶ້ນຫຼັງຈາກສັກຢາຄັ້ງທີໜຶ່ງຫຼືຄັ້ງທີສອງແຕ່ວ່າສ່ວນໃຫຍ່ຈະເກີດຂຶ້ນຫຼັງຈາກສັກຢາຄັ້ງທີສອງ.

ຖ້າທ່ານຮູ້ສຶກເຈັບທີ່ບໍລິເວນສັກຢາຫຼືມີອາການໄຂ້, ເຈັບຫົວຫຼືປວດຕາມຮ່າງກາຍຫຼັງຈາກສັກຢາວັກຊີນ, ທ່ານສາມາດກິນຢາແກ້ປວດ paracetamol ຫຼື ibuprofen. ອັນນີ້ ຈະຊ່ວຍຫຼຸດຜ່ອນບາງອາການຂ້າງເທິງ (ທ່ານບໍ່ຈຳເປັນຕ້ອງກິນຢາ paracetamol ຫຼື ibuprofen ກ່ອນສັກຢາ). ຖ້າມີອາການໂຄ່ຢູ່ບໍລິເວນສັກຢາ, ທ່ານກໍສາມາດໃຊ້ຖົງເຢັນຂົ້ມໄວ້ໄດ້.

**ອາການຂ້າງຄຽງທີ່ ເກີດໄດ້ຍາກ ທີ່ໄດ້ຖືກລາຍງານຫຼັງຈາກສັກຢາ Comirnaty ແມ່ນ**:

- ປະຕິກິລິຍາແພ້ຢ່າງຮຸນແຮງ (anaphylaxis)

ທ່ານຕ້ອງໄປຫາໝໍຫຼັງຈາກສັກວັກຊີນແລ້ວ ຖ້າວ່າ:

- ທ່ານຄິດວ່າທ່ານອາດມີປະຕິກິລິຍາຂອງອາການພູມແພ້. ໃຫ້ໂທຫາ 000 ຖ້າທ່ານຮູ້ສຶກວ່າມີອາການຮຸນແຮງເກີດຂຶ້ນ, ເຊັ່ນຫາຍໃຈຍາກ, ຫາຍໃຈຫອບ, ຫົວໃຈເຕັ້ນແຮງຫຼືຄວາມດັນລົງຕ່ຳ.
- ຖ້າທ່ານກັງວົນວ່າອາດເກີດອາການຂ້າງຄຽງໃດໜຶ່ງຫຼືມີອາການທີ່ເກີດຂຶ້ນໃໝ່ຫຼືບໍ່ເຄີຍເປັນມາກ່ອນ.
- ທ່ານມີອາການຂ້າງຄຽງທີ່ຮູ້ວ່າຈະເກີດຂຶ້ນຍ້ອນການສັກວັກຊີນແຕ່ວ່າອາການນັ້ນບໍ່ຫາຍໄປຫຼັງຈາກສອງສາມມື້ແລ້ວ.

ສຳລັບອາການທີ່ບໍ່ຮີບດ່ວນ, ທ່ານສາມາດໄປຫາແພດດູແລສຸຂະພາບປະຈຳຂອງທ່ານໄດ້ (ຕາມປົກກະຕິແມ່ນGP).

## ການຕິດຕາມເບິ່ງຄວາມປອດໄພຂອງຢາວັກຊີນແລະການລາຍງານອາການຂ້າງຄຽງ

ທ່ານສາມາດລາຍງານອາການຂ້າງຄຽງທີ່ສົງໄສທີ່ກ່ຽວພັນກັບການສັກວັກຊີນຂອທ່ານກັບຜູ້ສັກຢາໃຫ້ທ່ານຫຼືເຈົ້າໜ້າທີ່ແພດອື່ນໆທີ່ດູແລສຸຂະພາບຂອງທ່ານ. ເຂົາເຈົ້າຈະເຮັດລາຍງານຢ່າງເປັນທາງການຕາງໜ້າທ່ານໄປຫາກະຊວງສາທາລະນະສຸກປະຈຳລັດຫຼືເຂດປົກຄອງພິເສດຂອງທ່ານ ຫຼື ລາຍງານໂດຍຕົງຫາ ຄະນະກຳມະການຄຸ້ມຄອງສິນຄ້າທີ່ໃຊ້ໃນການປິ່ນປົວ (TGA).

ຖ້າທ່ານປະສົງຢາກລາຍງານດ້ວຍຕົວທ່ານເອງ, ກະລຸນາເຂົ້າໄປທີ່ reporting suspected side effects associated with a COVID-19 vaccine webpage ຂອງເວັບໄຊ້ຂອງ TGA ແລະເຮັດຕາມຂັ້ນຕອນທີ່ແຈ້ງໄວ້ໃນໜ້າເວັບໄຊ້ນັ້ນ.

## ການກວດຫາ COVID-19 ຫຼັງຈາກສັກຢາວັກຊີນ

ອາການຂ້າງຄຽງທີ່ເກີດຂຶ້ນຈາກການສັກຢາຕ້ານ COVID-19 ອາດຄ້າຍຄືກັນກັບອາການຂອງພະຍາດ COVID-19 ເອງ (ຕົວຢ່າງ ມີອາການໄຂ້). ຢ່າງໃດກໍຕາມ, Comirnaty ບໍ່ມີສ່ວນປະກອບຂອງເຊື້ອໄວຣັສທີ່ມີຊີວິດໃດໆແລະບໍ່ສາມາດກໍ່ໃຫ້ເກີດ COVID-19. ທ່ານອາດຈະບໍ່ຈຳເປັນຕ້ອງໄປກວດຫາ COVID-19 ຫຼືຕ້ອງແຍກປ່ຽວ:

- ຖ້າວ່າທ່ານເກີດມີອາການທົ່ວໆຂອງການເປັນໄຂ້, ເຈັບຫົວ ຫຼື ອິດເມື່ອຍໃນລະຫວ່າງສອງມື້ທຳອິດຫຼັງຈາກສັກວັກຊີນ, ແລະ
- ຖ້າທ່ານໝັ້ນໃຈວ່າທ່ານບໍ່ມີອາການຂອງລະບົບທາງເດີນຫາຍໃຈ (ເຊັ່ນ ນ້ຳມູກໄຫຼ, ໄອ, ເຈັບຄໍ, ບໍ່ຮູ້ສຶກໄດ້ກິ່ນຫຼືລົດຊາດອາຫານ),

ຢ່າງໃດກໍຕາມ, ທ່ານຄວນກວດເບິ່ງຄຳແນະນຳອັນປັດຈຸບັນທີ່ທາງລັດຖະບານ/ເຂດປົກຄອງຂອງທ່ານອອກມາເພື່ອເອົາຂໍ້ມູນອັບເດດໃໝ່ລ່າສຸດ. ຄຳແນະນຳນີ້ອາດຈະປ່ຽນແປງໄປໃນກໍລະນີທີ່ມີການລະບາດຂອງ COVID-19 ຂຶ້ນໃນເຂດທ້ອງຖິ່ນຂອງທ່ານ. ທ່ານຍັງອາດຕ້ອງໄປເຮັດການກວດຫາ COVID-19 ຖ້າທ່ານຕົກຢູ່ໃນເງື່ອນໄຂອື່ນ, ຍົກຕົວຢ່າງ, ຖ້າທ່ານເປັນຄົນໃກ້ຊິດກັບກໍລະນີທີ່ຮູ້ວ່າມີພະຍາດ COVID-19. ຖ້າສົງໄສ, ໃຫ້ໄປຮັບການກວດຈາກແພດ.

## ໃຫ້ຈື່ການນັດໝາຍຄັ້ງທີສອງຂອງທ່ານ

ເປັນສິ່ງສຳຄັນທີ່ທ່ານຕ້ອງໄດ້ຮັບການສັກຢາ Comirnaty (Pfizer) ເປັນຈຳນວນສອງໂດສ, ຢ່າງນ້ອຍຫ່າງກັນສາມອາທິດ. ຢາໂດສທີສອງມີແນວໂນ້ມວ່າຈະເຮັດໃຫ້ລະຍະການປົກປ້ອງຈາກ COVID-19 ຍາວນານຂຶ້ນ.

## ຂໍ້ມູນທີ່ທ່ານໃຫ້ໃນມື້ນັດໝາຍຈະຖືກນຳໃຊ້ຢ່າງໃດ

ສຳລັບຂໍ້ມູນກ່ຽວກັບວ່າຂໍ້ມູນສ່ວນຕົວຂອງທ່ານຈະຖືກເກັບກຳ, ຮັກສາ ແລະ ນຳໃຊ້ຢ່າງໃດນັ້ນ ຂໍໃຫ້ເຂົ້າໄປເບິ່ງ

https://www.health.gov.au/using-our-websites/privacy/privacy-notice-for-covid-19-vaccinations